GCI

# ບົດທີ 2
# ຄອບຄົວຄຣິສຕຽນ

## *ອະລຳພາບົດ*

ຈຸດປະສົງຂອງບົດຮຽນ

- ເພື່ອໃຫ້ມີຄວາມເຂົ້າໃຈເຖິງຄວາມສຳພັນລະຫວ່າງສາມີ ແລະພັນລະຍາ
- ເພື່ອຄົ້ນຫາຫລັກການຂອງພະຄຳພີໃນເລື່ອງການໃຊ້ຊີວິດຮ່ວມກັນ
- ເພື່ອຄົ້ນພົບສິ່ງທີ່ເຮົາຈຳເປັນຕ້ອງປ່ຽນແປງ

## *ໂຄງຮ່າງບົດຮຽນ*

### *I. ຄຣິສຕຽນຊຶ່ງເປັນສາມີ*

ກ. ເປັນຜູ້ນຳຝ່າຍວິນຍານ
ຂ. ເປັນຜູ້ຊາຍຊຶ່ງພັນລະຍາໃຫ້ຄວາມເຄົາລົບນັບຖື
ຄ. ເປັນຜູ້ຊາຍຊຶ່ງຮັກພັນລະຍາ
ງ. ເປັນຜູ້ຊາຍຊຶ່ງດຳເນີນຊີວິດຢູ່ກັບພັນລະຍາ
ຈ. ເປັນຜູ້ຊາຍຊຶ່ງເຂົ້າໃຈ ແລະຮູ້ຈັກພັນລະຍາຂອງຕົນ
ສ. ເປັນຜູ້ຊາຍຊຶ່ງໃຫ້ກຽດແກ່ພັນລະຍາຂອງຕົນ
ຊ. ເປັນຜູ້ຊາຍຊຶ່ງລ້ຽງດູທະນຸທະໜອມພັນຂອງຕົນ
ຍ. ເປັນຜູ້ຊາຍຊຶ່ງສື່ສານກັບພັນລະຍາຢ່າງໃກ້ຊິດສະໜິດສະໜົມ
ດ. ຜົນຮັບ

### *II. ຄຣິສຕຽນຊຶ່ງເປັນພັນລະຍາ*

ກ. ເປັນຜູ້ທີ່ຍອມຢູ່ໃຕ້ການນຳສາມີ
ຂ. ເປັນຜູ້ທີ່ໃຫ້ກຽດໃນຄວາມເປັນຫົວຂອງສາມີ
ຄ. ເປັນຜູ້ທີ່ຊື່ນຊົມເຫລື້ອມໃສໃນຕົວສາມີ
ງ. ເປັນຜູ້ທີ່ຍົກຍ້ອງແລະໃຫ້ກຳລັງໃຈສາມີ
ຈ. ເປັນຜູ້ທີ່ໄດ້ຮັບຄຳຍົກຍ້ອງຈາກຄົນອື່ນ
ສ. ເປັນຜູ້ທີ່ມີວິນຍານອ່ອນໂຍກ ແລະສະຫງົບນົບນ້ອມ
ຊ. ເປັນຜູ້ທີ່ມີໃຈກະຕັນຍູ
ຍ. ເປັນຜູ້ທີ່ຮູ້ຈັກຕອບສະໜອງຢ່າງເໝາະສົມ

GCI

# I. <u>ຄຣິສຕຽນຊຶ່ງເປັນສາມີ</u>

"ເຈົ້າທັງຫລາຍຈົ່ງລະວັງໃຫ້ດີ, ຈົ່ງຢຶດໝັ້ນໃນຄວາມເຊື່ອ ຈົ່ງສະແດງຕົວເປັນ...**1 ໂກຣິນໂທ 16:13-14**

ຄຸນລັກສະນະພື້ນຖານ 8 ປະການຂອງຜູ້ຮັບໃຊ້ພະເຈົ້າ

## *ກ. ເປັນຜູ້ນຳຝ່າຍ<u>ວິນຍານ</u>*

<u>ກ່ອນສິ່ງອື່ນໃດເຂົາຕ້ອງເປັນຜູ້ນຳຝ່າຍວິນຍານສຳລັບຄອບຄົວຂອງຕົນເອງ</u>

ຖ້າຜູ້ຊາຍຜູ້ໃດບໍ່ຮູ້ຈັກຄອບຄອງບ້ານເຮືອນຂອງຕົນ ຜູ້ນັ້ນຈະດູແລຄຣິສຕະຈັກຂອງພະເຈົ້າໄດ້ຢ່າງໃດ? **1ຕີໂມທຽວ3:4-5**

ພັນທະກິດຢ່າງທຳອິດຂອງຜູ້ຊາຍ ຄືພັນທະກິດຕໍ່ພັນລະຍາ ຈາກນັ້ນຈຶ່ງເປັນພັນທະກິດຕໍ່ລູກຂອງຕົນ

1. ຕົວຢ່າງ: - ໂນອາສ້າງເຮືອ **ເຮັບເຣີ 11:7**
   - ກ) ໂດຍຄວາມເຊື່ອ - ການເຊື່ອຟັງ **ເຮັບເຣີ 11:8**
   - ຂ) ທ່ານໄດ້ຮັບຄຳເຕືອນ **1 ຕີໂມທຽວ3:1, ມັດທາຍ24:37**
   - ຄ) ເລີ້ມທຳການດ້ວຍຄວາມຢ້ານຢຳ **ໂຢບ 1:1,5 ສຸພາສິດ 16:6**
   - ງ) ສ້າງ **1 ໂກຣິນໂທ 3:9**
   - ຈ) ຄວາມຝັນ **ລູກາ11:21-22, 12:35-39**
2. **1ຕີໂມທຽວ3:4** ໃນພາສາກຣີກໃຊ້ຄຳວ່າ "ຢືນຢູ່ຕໍ່ໜ້າ" ໃນຖານະຜູ້ນຳຜູ້ຊາຍຢືນຢູ່ຕໍ່ໜ້າຄອບຄົວຂອງຕົນ
3. **1ໂກຣິນໂທ 11:3** **ຫົວ**ຂອງຄອບຄົວ - ຕຳແໜ່ງຊຶ່ງພະເຈົ້າຊົງປະທານໃຫ້
4. **ມາຣະໂກ 10:43-45** **ເປັນຜູ້ຮັບໃຊ້**
5. **ສະເລີຍທຳບັນຍັດ 6:6,9** **ເປັນຄູ** **ເອເຟໂຊ6:4**
   **ສຸພາສິດ 13:24;22:6,15; 23:12; 19:18; 29:15,17**
6. **ສຸພາສິດ29:18** ເປັນຄົນຊຶ່ງມີນິດມິດ

   ຊ່ວຍໃຫ້ລູກໆຄົ້ນພົບກັບເປົ້າໝາຍໃນຊີວິດ ແລະບັນລຸຜົນຕາມ ສັກກະຍະພາບຂອງເຂົາ

GCI

## *ຂ. ເປັນຜູ້ຊາຍຊຶ່ງພັນລະຍາໃຫ້ຄວາມເຄົາລົບນັບຖື*

ຄວາມເຄົາລົບນັບຖື ບໍ່ແມ່ນເລື່ອງທີ່ຈະຮຽກຮ້ອງເອົາຈາກໃຜໄດ້ ແຕ່ເປັນສິ່ງທີ່ຕ້ອງສ້າງຂຶ້ນ ຈົນພັນລະຍາ ລູກໆ ແລະຄົນອື່ນໆຮູ້ສຶກຢ່າງນັ້ນດ້ວຍຄວາມເຕັມໃຈ **ຕີໂຕ 1:6–10**

1. ຮັກພະເຈົ້າ – ເປັນນັກອະທິຖານ
2. ຮັກພະວັດຈະນະຂອງພະເຈົ້າ – ສຶກສາພະຄໍາພີ **ເພງສັນລະເສີນ 1**
3. ເຕັມລົ້ນດ້ວຍພະວິນຍານ **ເອເຟໂຊ 5:18**
4. ຢູ່ໃຕ້ການນໍາຂອງພະວິນຍານ **ຄາລາເຕັຽ 5:18**
5. ມີຜົນຂອງພະວິນຍານຢູ່ໃນຊີວິດ **ຄາລາເຕັຽ 5:19–25**
6. ເປັນຜູ້ເຂົ້າສ່ວນໃນຊີວິດຂອງພະເຈົ້າ **2ເປໂຕ 1:4–11**

## ຄ. ເປັນຜູ້ຊາຍຊຶ່ງຮັກພັນລະຍາຂອງຕົນ

**ເອເຟໂຊ 5:25**

ຄວາມຮັກຄືການໃຫ້/ ເສັຽສະຫລະ...

ຕົວຢ່າງຂອງພະເຢຊູ: **ຟີລິບບອຍ 2:5–8**

1. ພະເຢຊູຊົງສະຖາປານາ**ພັນທະສັນຍາ**ກັບເຈົ້າສາວຂອງພະອົງ
   ອົງພະຜູ້ເປັນເຈົ້າ ຊົງເປັນພະເຈົ້າຜູ້ຊົງສ້າງ ແລະຮັກສາພັນທະສັນຍາ **ເອຊາຢາ54:10**

   ພັນທະສັນຍາ 8 ປະການທີ່ພະເຈົ້າຊົງກະທໍາໃນພະຄໍາພີ

   ຈະເຂົ້າສູ່ພັນທະສັນຍາໄດ້ໂດຍ:

   ກ) ຂໍ້ຕົກລົງ ແລະຄໍາສາບານ

   ຂ) ການລັ່ງໂລຫິດ **ປະຖົມມະການ 15:9**

   ຄ) ເຄື່ອງໝາຍຂອງພັນທະສັນຍາ **ປະຖົມມະການ 9:12 ສາຍຮຸ້ງ** **15:7 ແຜ່ນດິນ**

   ງ) ການປ່ຽນຊື່ໃຫມ່ **ປະຖົມມະການ 17:5**

   ຈ) ສອງຝ່າຍກາຍເປັນນຶ່ງດຽວ-ຜູ້ຮັບມໍລະດົກຮ່ວມກັນ – ຕໍ່ສູ້ກັບຄົນນຶ່ງເທົ່າກັບຕ້ອງຕໍ່ສູ້ກັບອີກຄົນນຶ່ງ

GCI

ການສົມລົດ ຄືພັນທະສັນຍາຢ່າງນຶ່ງ **ມາລາກີ2:14**

ຕາມແບບຂອງ"ພັນທະສັນຍາ"ພະເຢຊູຄຣິດໄດ້ກະທຳກັບເຈົ້າສາວຂອງພະອົງ
ຄືຄຣິສຕະຈັກ

ເກີດຈາກແຮງບັນດານໃຈທີ່ສຳຄັນ ຄືຄວາມຮັກ
ການສະແດງອອກຄື

ກ) __**ການເສັຽສະລະ**__ – ຍອມສະລະຊີວິດ **ເອເຟໂຊ 5:25**
ຕາຍຈາກການມີຊີວິດຢູ່ພຽງລຳພັງ

ຂ) __**ຄວາມຈົງຮັກພັກດີ**__ "ເຮົາຈະບໍ່ປະຖິ້ມທ່ານເລີຍ" **ເຮັບເລີ 13:5**

ຄ) __**ການລ້ຽງດູ**__ – "ແລ້ວພະອົງຈະຊົງເພີ້ມເຕີມສິ່ງທັງປວງເຫລົ່ານີ້ໃຫ້ແກ່ທ່ານ"

ງ) __**ການປົກປ້ອງ**__- "ຈະບໍ່ມີສິ່ງໃດເຮັດອັນຕະລາຍແກ່ທ່ານໄດ້"

ຈ) __**ຊັບສົມບັດ**__ – "ເປັນຜູ້ຮັບມໍລະດົກຮ່ວມກັນ"

ຄວາມສຳພັນທາງເພດເປັນສ່ວນນຶ່ງໃນການເຮັດພັນທະສັນຍາ
ການລ່ວງປະເວນີຄືສິ່ງທີ່ເຮັດໃຫ້ພັນທະສັນຍາ ເປັນມົນທິນ

2. **ຜົນ**ຂອງພັນທະສັນຍາ

"ແລະເຂົາທັງສອງຈະເປັນເນື້ອອັນດຽວກັນ" **ປະຖົມມະການ2:21-25**

ກ) ຄວາມໝາຍຂອງການເປັນເນື້ອອັນດຽວກັນ

ມະນຸດເປັນສິ່ງມີຊີວິດທີ່ປະກອບດ້ວຍ 3 ສ່ວນ **1ເທຊະໂລນິກ 5:23**

ອາດາມກັບເອວາ ມີຄວາມເປັນອັນນຶ່ງອັນດຽວກັນຢ່າງສົມບູນ -ຝ່າຍວິນຍານ ຈິດໃຈ ແລະ

ຮ່າງກາຍເຂົາທັງສອງເປັນນຶ່ງດຽວກັນ **ເອເຟໂຊ 5:28**

ເຂົາເປືອຍກາຍ ໝາຍເຖິງ ການເປີດເຜີຍ ໂປ່ງໃສ ຕໍ່ກັນ
ໂດຍບໍ່ອາຍກັນ ໝາຍເຖິງ ຊື່ຕົງຕໍ່ກັນ
ມີຄວາມເຫັນດີກັນ **ມັດທາຍ 18:18-19**

ຂ) ຊາຕານຮູ້ດີເຖິງພະລັງແຫ່ງຄວາມສຳພັນ ມັນຈຶ່ງພະຍາຍາມທຳລາຍເພື່ອຍາດຊິງສິດທິອຳນາດໄປຈາກພວກເຂົາ

1. **ປະຖົມມະການ3:7** ກາຍເປັນຄົນທີ່ຍຶດຕົວເອງເປັນສູນກາງ ລີ້ຊ້ອນພະຍາຍາມປົກປິດກັນແລະກັນ ຊຶ່ງເປັນເຊັ່ນດຽວກັນກັບຄົນໃນຍຸກນີ້

2. **ປະຖົມມະການ 3:8** ລີ້ຕົວຈາກພະເຈົ້າ ພະເຈົ້າຈະຕ້ອງມີສ່ວນໃນການສົມລົດ

GCI

3. **ປະຖົມມະການ3:12** ລືມໄປວ່າສັດຕູເປັນໃຜ ພະຍາຍາມແກ້ຕົວເລື່ອງຄວາມບາບຂອງຕົນ
4. **ປະຖົມມະການ 4:1** ເຫລືອພຽງຄວາມສຳພັນທາງຝ່າຍຮ່າງກາຍ

ຄ) ພະເຢຊູຄຣິດສະເດັດມາເພື່ອໄຖ່ ແລະຟື້ນຟູໃຫ້ກັບສູ່ມາດຕະຖານເດີມ
**ມັດທາຍ 19:3–9** **ມາຣະໂກ 10:2–12** **ລູກາ16:15,18**

**ກ່ອນການໄຖ່–**
ພະບັນຍັດຍອມໃຫ້ມີການຢ່າຮ້າງເພາະໃຈແຂງກະດ້າງ
ພະເຢຊູສະເດັດມາເພື່ອປ່ຽນໃຈຫີນອອກໄປຈາກເຮົາ **ເຢເຣມີ 32:39**

ແຜນການດັ້ງເດີມນັ້ນ ບໍ່ມີການແຍກທາງ ຫລື**ການຢ່າງຮ້າງລວມຢູ່ນຳ**

ເມື່ອສັ່ງສອນສາວົກຂອງພະອົງພະເຢຊູບໍ່ຍອມໃຫ້ມີຂໍ້ອ້າງສຳລັບຫານຢ່າງຮ້າງ
**ມາຣະໂກ10:11–12**

"ເວັ້ນແຕ່ເມື່ອຝ່າຍໃດຝ່າຍນຶ່ງບໍ່ຊື່ສັດ" – ຄຳຕັດກັບພວກຟາລີຊາຍຊຶ່ງມີໃຈແຂງກະດ້າງ ບໍ່ໃຫ້ຍົກມາເປັນຂໍ້ອ້າງ

ແຕ່ໂມເຊປະກາດເຊັ່ນນັ້ນເພື່ອຕອບສະໜອງຕໍ່ປະຊາຊົນຊຶ່ງມີໃຈແຂງກະດ້າງ

ການແຕ່ງງານໃຫມ່ ຂະນະທີ່ຄູ່ສົມຣົດຍັງມີຊີວິດຢູ່ ຖືເປັນການລ່ວງປະເວນີ

**ໂຣມ7:3** **ລູກາ16:18** **ມາຣະໂກ 10:11–12**

**1ໂກຣິນໄທ 7:1** ທາງເລືອກ 2 ປະການ
1.ຄົງຄວາມເປັນໂສດຕໍ່ໄປ
2.ກັບຄືນດີກັບຄູ່ຄອງຄົນເດີມ

**ໂຣມ 8:1** "ເຫດສະນັ້ນ ບໍ່ມີການປັບໂທດອີກຕໍ່ໄປ.."

## ງ. ເປັນສາມີ**ຊຶ່ງດຳເນີນຊີວິດ**ຢູ່ກັບພັນລະຍາ

**1ເປໂຕ 3:7**

"ດຳເນີນຊີວິດຢູ່ກັບ" ມີຊີວິດຢູ່ນຳກັນ/ ບໍ່ແຍກຈາກກັນ

ພັນລະຍາບໍ່ແມ່ນ**ຄົນຮັບໃຊ້** ທີ່ຮັບຊັກຜ້າ ຫລືເຮັດອາຫານ

**ລູກາ 4:18** ການມີຊີວິດຢູ່ຮ່ວມກັນເຮັດໃຫ້ເກີດການປ່ຽວຢາ ຫລືເຮັດໃຫ້ຫາຍດີ

1. **ການຍອມຮັບ** (ທຽບກັບ ການປະຕິເສດ) ໃນຂະນະທີ່ເຮົາຍັງເປັນຄົນບາບຢູ່ນັ້ນ – ພະອົງຊົງເລືອກ ເຮົາ
2. **ຄວາມພໍໃຈ**(ທຽບກັບ ການບໍ່ພໍໃຈ) ນ້ຳສຽງສະແດງຄວາມພໍໃຈ ມາຣະໂກ10:21
3. **ສຳຜັດໃກ້ຊິດ**(ທຽບກັບ ການເຫີນຫ່າງ) ບົດເພງຊາໂລມອນ

**ລູກາ 24:39** ຈົ່ງສຳພັດເບິ່ງເຮົາ

GCI

**ມາຣະໂກ 6:56** ທຸກຄົນທີ່ໄດ້ຮັບການແຕະຕ້ອງກໍຫາຍໂລກ

4. **ການຄືນດີ** – ການຟື້ນຟູສູ່ຄວາມສຳພັນອັນດີ ມັດທາຍ 5:21–24

5. **ການຍົກໂທດ 1ໂກຣິນໂທ 13:5** "ຄວາມຮັກບໍ່ຊ່າງຈົດຈຳຄວາມຜິດ"

**1ເປໂຕ4:8**"ກ່ອນສິ່ງອື່ນໃດ ທ່ານຈົ່ງຮັກກັນແລະກັນດ້ວຍໃຈຮ້ອນຮົນເພາະ ຄວາມຮັກປົກປິດຄວາມ ຜິດໄດ້ຫລາຍ"

**ນິຍາມ**–ຄືການໃຫ້ອະໄພໃນຄວາມຜິດທີ່ໄດ້ກະທຳ ຫລືການຍົກໜີ້ສິນ ແລະການຍົກເລີກສິດທິທີ່ຈະຮຽກຮ້ອງທຸກຢ່າງ

**ການຍົກໂທດ** ຄືຄຳບັນຊາຈາກພະເຈົ້າ

ກ) ຖ້າເຮົາຍົກໂທດ ເຮົາກໍໄດ້ຮັບການຍົກໂທດ ມັດທາຍ 6:14–15

ຂ) ການບໍ່ໃຫ້ອະໄພ ເຮັດໃຫ້ເຮົາຖືກຜູກມັດ ມັດທາຍ 18:23–35
   1) ການເຈັບປ່ວຍທາງກາຍ ແລະຈິດໃຈ
   2) ອາດເປັນຮາກເຫງົ້າເຮັດໃຫ້ມານສ້າງປ້ອມຂຶ້ນມາໄດ້
   3) ເກີດຜົນເສັຽຕໍ່ທັງສອງຝ່າຍ ໂຢຮັນ20:23

ຄ) ຂັດຂວາງພະສັນຍາຂອງພະເຈົ້າ **ມັດທາຍ5:23–24 ແລະ ມາຣະໂກ 11:25**
   ຢ່ານຳຄວາມຜິດໄປເລົ່າໃຫ້ຄົນອື່ນຟັງ **ສຸພາສິດ 17:9**

ງ) ການຍົກໂທດ ບໍ່ຈຳເປັນຕ້ອງລໍໃຫ້ຄູ່ສົມຣົດກັບໃຈໃໝ່ເສັຽກ່ອນ
   ຕົວຢ່າງ ພະເຢຊູ ລູກາ23:24, ສະເຕເຟນ ກິດຈະການ 7:60

ຈ) ເຮົາຕ້ອງຍົກໂທດ ໂດຍບໍ່ຈຳກັດຈຳນວນຄັ້ງ
   ມັດທາຍ 18:22
   1) ຄວາມຮັກບໍ່ຊ່າງຈົດຈຳຄວາມຜິດ 1ໂກຣິນໂທ 13:5
      ຄວາມຮັກປົກກະຕິຄວາມຜິດໄດ້ຫລວງຫລາຍ 1ເປໂຕ4:8
   2) ຖ້າຄູ່ສົມຣົດຂອງເຮົາເຮັດຄວາມຜິດຊ້ຳແລ້ວຊ້ຳອີກ
      ຈົ່ງຍົກໂທດໃຫ້ເຂົາຢ່າງທີ່ພະເຈົ້າຊົງຍົກໂທດ
      ເອຊາຢາ43:25
      ເພງສັນລະເສີນ103:12

ສ) ການຍົກໂທດ ຄືສິ່ງທີ່ເຮົາຕ້ອງເຮັດດ້ວຍເຈດຕະນາ
   ແລ້ວຄວາມຮູ້ສຶກຈະຕາມມາເອງ

ຊ) ຄວາມຈຳເປັນທີ່ຕ້ອງສຳຫລວດຕົວເອງ ບໍ່ແມ່ນກວດສອບຄູ່ສົມຣົດ
   1) ຄວາມຊອບທຳດ້ວຍຕົນເອງ
      ມັດທາຍ7:1–5 ລູກາ6:37
      ບໍ່ມີຄວາມບາບນ້ອຍ ຫລືບາບໃຫຍ່ ສຳລັບພະເຈົ້າ ບາບກໍຄືບາບ
      1ໂຢຮັນ2:4;3:4
   2) ເຮົາປຽບເປັນເໝືອນຜູ້ທີ່ເຮົາຕັດສິນ
   3) ການແຍກຂາດຈາກພະເຈົ້າ
      ມັດທາຍ 6:14–15
      ເຮົາຈະບໍ່ຈະເລີນ ສຸພາສິດ 28:13
   4) ຄວາມຂົມຂື່ນ
      ເຮັບເລີ 12:15
      ມັນທຳລາຍເຮົາ ກໍ່ຜົນກະທົບຕໍ່ຄົນອື່ນ
      ເຮັດໃຫ້ຈິດໃຈເຮົາແຂງກະດ້າງ ກໍ່ເກີດຄວາມບາບຊະນິດອື່ນໆ
      ຢຽບຢ່ຳ ແລະປະຫານຄວາມຮັກ

GCI

5) ການຮັບມືກັບຄວາມຜິດຂອງອີກຝ່າຍນຶ່ງ
   ເປັນເລື່ອງງ່າຍທີ່ຈະເຮັດ
6) ການຍົກໂທດໃຫ້ຕົວເອງ
7) ການຍົກໂທດໃຫ້ຜູ້ອື່ນ
8)

## *ຈ. ເປັນຜູ້ຊາຍຊຶ່ງເຂົ້າໃຈ ແລະຮູ້ຈັກພັນລະຍາຂອງຕົນ*

**1ເປໂຕ 3:7**

1. ເຮົາຕ້ອງທຳຄວາມເຂົ້າໃຈໃນພັນລະຍາ ສະແດງອອກໃຫ້ນາງເຫັນໂດຍ

   ກ) ໃຫ້ການປົກປ້ອງ – ເພື່ອຄຸ້ມຄອງນາງ ນລຸດ 3:9 ສະໜັບສະໜູນຢູ່ຝ່າຍນາງ
   ຂ) ຮັບຟັງນາງຢ່າງຕັ້ງໃຈ ອັນໃດຄືສິ່ງທີ່ນາງກຳລັງພະຍາຍາມບອກ
   ຄ) ໄວຕໍ່ຄວາມຮູ້ສຶກ- ໃນຝ່າຍວິນຍານ ຈິດໃຈ ແລະຮ່າງກາຍ
   ງ) ຮູ້ເຖິງຈຸດແຂງ ແລະຈຸດອ່ອນຂອງນາງ
   ຈ) ຮູ້ຈັກຂອງປະທານ ແລະຄວາມສາມາດຂອງນາງ
   ສ) ຍົກຫູ ແລະອ້ອມແຂນໃຫ້ພັນລະຍາ ບໍ່ແມ່ນປາກ

2. "ຕາມຄວາມຮູ້" ຄືການເຫັນຊອບດ້ວຍກັນ

   "ສອງຄົນຈະຍ່າງໄປດ້ວຍກັນໄດ້ບໍ່ ນອກຈາກທັງສອງຈະໄດ້ຕົກລົງກັນໄວ້ກ່ອນ" ອາໂມດ3:3

   ກ. ຖ້າສາມີພັນລະຍາປັດສະຈາກການເຫັນຊອບດ້ວຍກັນຄອບຄົວຈະຂາດສັນຕິສຸກ
   ຢາໂກ ໂບ3:16

      ກ) ເປີດຊ່ອງໃຫ້ມານໂຈມຕີໄດ້
      ຂ) ເຮັດໃຫ້ເຮົາຢູ່ນອກນ້ຳພະໄທພະເຈົ້າ
      ຄ) ນຳໄປສູ່ການໂທດກັນ ແລະກັນເມື່ອເກີດຄວາມຫລົ້ມເຫລວ
         "ຂ້ອຍບອກເຈົ້າແລ້ວ" "ເຈົ້າຄິດວ່າເຈົ້າຖືກຕະຫລອດ"

   ຂ. ການເຫັນດ້ວຍກັນ ຕາມທາງວິຖີທາງຂອງພະເຈົ້າ
   ມັດທາຍ18:19 ການເຫັນຊອບໝາຍເຖິງຄວາມກົມກຽວ
   ເຮົາຕ້ອງເຫັນຊອບດ້ວຍກັນ ບໍ່ແມ່ນຕາມຄວາມຕ້ອງການຂອງເຮົາແຕ່ຕາມນ້ຳພະໄທຂອງ ພະເຈົ້າ

   ພະເຈົ້າຊົງຕັດຜ່ານທາງ

      ກ) ພະວັດຈະນະຂອງພະອົງ
      ຂ) ການອະທິຖານ "ສິ່ງໃດໆ ທີ່ເຂົາທູນຂໍ.." ມັດທາຍ 18:19
         ທັງສອງຝ່າຍຈຳເປັນຕ້ອງໄດ້ຍິນສຽງພະອົງ ລູກາ 11:10
      ຄ) ເວລາທີ່ໃຊ້ໃນການເຫັນຊອບດ້ວຍກັນນ້ອຍກ່ວາເວລາທີ່ໃຊ້ໃນການແກ້ໄຂຄວາມຫຍຸ້ງ
         ເຫຍີງທີ່ເກີດຈາກການຕັດສິນໃຈທີ່ຜິດພາດຫລາຍກ່ວາ
      ງ) ສາມີ ຄືຜູ້ນຳໃນການມຸ້ງສູ່ການເຫັນພ້ອມດ້ວຍກັນ
      ຈ) ຈົ່ງຕັ້ງໃຈທີ່ຈະບໍ່ຕັດສິນໃຈເລື່ອງໃຫຍ່ໆ ໂດຍຂາດຄວາມເຫັນຊອບຮ່ວມກັນ

GCI

ຄ. ວິທີທີ່ຜິດໃນການສະແຫວງຫາຄວາມເຫັນຊອບດ້ວຍກັນ

ກ) ປັດສະຈາກການຕໍ່ສູ້
ຂ) ຄວາມຄິດເຫັນຈາກຜູ້ຊ່ຽວຊານ
ຄ) ການປານີປານອມ
ງ) ຜູ້ທີ່ແຂງແຮງກ່ວາເປັນພົ້ນ
ຈ) ການບີບບັງຄັບ
ສ) ນິ້ງເສີຍ
ຊ) ປະຕູທີ່ເປີດ ແລະປະຕູທີ່ປິດ

ງ. ວິທີເຮັດໃຫ້ນ້ຳພະໄທພະເຈົ້າສຳເລັດເປັນຈິງເທິງໂລກ
"ພະບິດາຂອງເຮົາຜູ້ຊົງສະຖິດໃນສະຫວັນກໍຈະຊົງກະທຳໃຫ້" **ມັດທາຍ 18:19**

ກ) ລໍຄອຍຈົນແນ່ໃຈວ່າທ່ານຮູ້ເຖິງນ້ຳພະໄທພະເຈົ້າແຈ່ມແຈ້ງແລ້ວ ຈະເຮັດໃຫ້ທ່ານໝັ້ນໃຈທີ່ຈະດຳ ເນີນຕໍ່ໄປ
ຂ) ມັນຈະເຮັດໃຫ້ນ້ຳພະໄທຂອງພະເຈົ້າມາສຳເລັດເປັນຈິງເທິງແຜ່ນດິນໂລກ
ຄ) ຄູ່ສົມລົດ ທີ່ສະແຫວງຫາຄວາມເຫັນຊອບດ້ວຍກັນໃນລັກສະນະນີ້ຢູ່ຢ່າງສະໝ່ຳສະເໝີ ຈະເລີ້ມຈົດຈໍ່ຢູ່ທີ່ນ້ຳພະໄທຂອງພະເຈົ້າຈົນເປັນສ່ວນນຶ່ງໃນຊີວິດປະຈຳວັນ

## *ສ. ເປັນຜູ້ຊາຍທີ່ໃຫ້ກຽດແກ່ພັນລະຍາຂອງຕົນ*

**1ເປໂຕ 3:7** "ຈົ່ງໃຫ້ກຽດແກ່ພັນລະຍາ"

1. ວາງໄວ້ເທິງແທ່ນ– ຣາຊີນີ ຍ່ອມປະພຶດຕິດຕາມທີ່ພະນາງເຫັນສົມຄວນ
2. ເຮັດໃຫ້ນາງຮູ້ວ່າເປັນ "ບຸກຄົນໝາຍເລກນຶ່ງ"

## ຊ. ເປັນຜູ້ຊາຍຊຶ່ງ<u>ລ້ຽງດູ</u> <u>ທະນຸທະນອມ</u>ພັນລະຍາຂອງຕົນ

**ເອເຟໂຊ 5:28–30**

## ຍ. ເປັນຜູ້ຊາຍຊຶ່ງ<u>ສື່ສານ</u>ກັບພັນລະຍາຢ່າງໃກ້ຊິດສະໜິດສະໜົມ

**ເອເຟໂຊ 5:26** ຊຳລະ ໝາຍເຖິງ ການແຍກໄວ້ເພື່ອຕົນເອງໂດຍສະເພາະ ເປັນຖານະທີ່ມີສິດທິພິເສດ

ຖ້າເຮົາຫວ່ານ ຄຳເວົ້າທີ່ຖືກຕ້ອງເຮົາກໍ**ເກັບກ່ຽວ**ຄວາມສະໜິດສະໜົມ
ຖ້າເຮົາຫວ່ານ ຄຳເວົ້າທີ່ຜິດ ເຮົາກໍ**ເກັບກ່ຽວ**ຄວາມເຫີນຫ່າງ

ການຫວ່ານ ແລະການເກັບກ່ຽວ **ຄາລາເຕັຽ 6:7–9**

1. ກິດຝ່າຍວິນຍານ

ກ) ເຊັ່ນດຽວກັບກິດທຳມະຊາດ – ຈະສຳເລັດເປັນຈິງ
ຂ) ການເພີກເສີຍໃນເລື່ອງນີ້ ບໍ່ໄດ້ຊ່ວຍໃຫ້ມັນຫຍຸດ
ຄ) ການເກັບກ່ຽວຈະເກີດຂຶ້ນຢ່າງແນ່ນອນ
ງ) ສິ່ງໃດທີ່ເຮົາຫວ່ານ ເຮົາຈະໄດ້ເກັບກ່ຽວສິ່ງນັ້ນ

GCI

2. ການຫວ່ານເມັດພືດ

ກ) ເມັດພືດຖ້າບໍ່ໄດ້ມາຈາກພະເຈົ້າ ກໍມາຈາກຊາຕານ

"ຂ້າພະເຈົ້າຂໍເຊີນສະຫວັນ ແລະໂລກໃຫ້ເປັນພະຍານຕໍ່ທ່ານໃນວັນນີ້ວ່າ ຂ້າພະເຈົ້າຕັ້ງຊີວິດ ແລະຄວາມຕາຍພະພອນ ແລະຄໍາສາບແຊ່ງໄວ້ຕໍ່ໜ້າທ່ານເພາະສະນັ້ນທ່ານຈຶ່ງເລືອກເອົາຂ້າງຊີວິດເພື່ອທ່ານແລະລູກຫລານຂອງທ່ານຈະໄດ້ມີຊີວິດຢູ່ດ້ວຍມີຄວາມຮັກຕໍ່ພະເຢໂຮວາພະເຈົ້າຂອງທ່ານເຊື່ອຟັງພະສຸລະສຽງຂອງພະອົງ ແລະຕິດພັນຢູ່ກັບພະອົງ ເຮັດເຊັ່ນນັ້ນຈະໄດ້ຊີວິດ ແລະຄວາມຍືນຍາວ ເພື່ອທ່ານຈະໄດ້ຢູ່ໃນແຜ່ນດິນຊຶ່ງພະເຈົ້າປະຕິຍານແກ່ບັນພະບູລຸດຂອງທ່ານຄື ແກ່ອັບລາຮາມ ແກ່ອີ ຊາກ ແລະຢາໂຄບວ່າ ຈະປະທານແກ່ທ່ານເຫລົ່ານັ້ນ"

ສະເຫລີຍທໍາບັນຍັດ 30:19–20

ຂ) ພະເຢຊູຊົງຫວ່ານຊີວິດ ສະເໝີ ໂຢຮັນ 14:6
ຄ) ຊາຕານຈະຫວ່ານຄວາມຕາຍ ຢູ່ສະເໝີ ໂຢຮັນ10:10
ງ) ບໍ່ມີເມັດພັນໃດທີ່ "ເປັນກາງ"
ຈ) ເຮົາກໍາລັງຫວ່ານຢູ່ສະເໝີ ດັ່ງນັ້ນເຮົາຈຶ່ງໄດ້ເກັບກ່ຽວຢູ່ສະເໝີເຊັ່ນກັນ
ສ) ເມື່ອເຮົາບັງເກີດໃຫມ່ແລ້ວ ເຮົາໄດ້ຮັບການຊົງນໍາໃຫ້ເລືອກເອົາແຕ່ສິ່ງທີ່ເປັນຊີວິດ ການໃຫ້ເມັດພືດ ໂຣມ 8:5
ຊ) ນິໄສເກົ່າ ມັກຈະເຮັດໃຫ້ເຮົາເລືອກເອົາເມັດພືດທີ່ຜິດ

3. ເມັດພືດຊະນິດຕ່າງໆ ທີ່ເຮົາຫວ່ານລົງໄປ

ກ) **<u>ຖ້ອຍຄໍາ</u>** "ລູກເຮົາດື້ຫລາຍ"
"ລູກຂອງເຮົາບໍ່ມີໃຈເຊື່ອຟັງພະເຈົ້າ"
"ຂ້ອຍເຮັດເລື່ອງນັ້ນບໍ່ໄດ້"
"ຂ້ອຍເຮັດທຸກສິ່ງໄດ້ໂດຍພະອົງຜູ້ຊົງເສີມກໍາລັງ"
ຂ) <u>ທັດສະນະຄະຕິ</u> ຄວາມຖ່ອມໃຈ ກັບຄວາມເຢີ້ຫຍິ່ງ ໃຈກະຕັນຍູ ກັບຄວາມອິມຂຶ່ນໃຈ
ຄ) **ການກະທໍາ** ການຍອມຮັບ ກັບການປະຕິເສດ
ການໃຫ້ດ້ວຍໃຈກວ້າງຂວາງ ກັບຄວາມເຫັນແກ່ຕົວ

4. ວິທີການຫວ່ານ

ກ) ເຮົາກໍາລັງຫວ່ານລົງໃນຊີວິດຂອງຕົນເອງ ພັນລະຍາ ແລະລູກໆ ຢູ່ສະເໝີ
ຂ) ຫົວໃຈຂອງເຮົາ ຄືດິນສໍາລັບການຫວ່ານ **ເຢເຣມີ 4:3–4**
ຄ) ຊະນິດຂອງດິນ – ມີຫີນປົນ ຫລື ມີໜາມປົກຄຸມ
ນໍ້າແຫ່ງພະວັດຈະນະ ແລະຄໍາອະທິຖານຈະເຮັດໃຫ້ດິນອ່ອນນຸ້ມ
ງ່າຍໃນການຖອນ

5. ອົງປະກອບຂອງການເກັບກ່ຽວ

ກ) ເວລາ ການລໍຄອຍ – ນໍ້າ – ປຸ໋ຍແຫ່ງການກະທໍາ – ຢ່າຂຸດຄຸ້ຍເມັດພືດ
ຂ) ການທະວີຄູນ ຈະໄດ້ເກັບກ່ຽວຕາມຊະນິດຂອງມັນ
1- "ສິ່ງໃດທີ່ເຮົາຫວ່ານ.."
2 – ສິ່ງທີ່ເກັບກ່ຽວຈະຫລາຍກວ່າສິ່ງຫວ່ານລົງໄປ
3 – ພືດພັນແຕ່ລະສ່ວນຈະມີເມັດພືດປົນຢູ່ ເພື່ອການເກັບກ່ຽວໃນອານາຄົດ
4- ຊາຕານໃຫ້ເມັດພືດດຽວແກ່ເຮົາເມັດດຽວ – ເຮົາປູກ ແລະເກັບກ່ຽວໄດ້ເປັນຈໍານວນຫລາຍ
5- ພະເຈົ້າຊົງຕຽມເມັດພືດໄວ້ຫລວງຫລາຍ ເພື່ອໃຫ້ເຮົາຫວ່ານ ແລະເກັບກ່ຽວໄດ້ຫລາຍຂຶ້ນ

GCI

6. ພິຈາລະນາເບິ່ງພຶດພັນ

ກ) ພຶດພັນທີ່ດີ– ຄົ້ນຫາເບິ່ງວ່າໃຊ້ເມັດພຶດຊະນິດໃດຫວ່ານລົງໄປ ແລ້ວເລືອກສັນໄວ້ເພື່ອຫວ່ານເພີ້ມ
ຂ) ພຶດພັນທີ່ຊົ່ວ – ການກັບໃຈໃຫມ່ ເປັນເໝືອນຢາຂ້າເມດພຶດ ອາດຈະຕ້ອງໃຊ້ເວລາ 1ໂຢຮັນ1:9

7. ການຫວ່ານພຶດພັນທີ່ດີ

ກ) ເລືອກເມັດພັນຈາກກະສອບຂອງພະເຈົ້າ
ຂ) ເລືອກໃຊ້ຖ້ອຍຄຳ ຢ່າງເໝາະສົມ
**ສະເຫລີຍທຳບັນຍັດ30:19**
**2ໂກຣິນໂທ 9:10**
ຄ) ຕຽມດິນໃຫ້ພ້ອມ
ຄຳອະທິຖານ/ ພະວັດຈະນະເພື່ອຄົນອື່ນ – ການອະທິຖານເພື່ອ ແລະເຮັດສົງຄາມຝ່າຍວິນຍານ
ງ) ກ່າວຖ້ອຍຄຳອອກໄປ ເພື່ອຫວ່ານ
**ສຸພາສິດ 18:21** **ໂຢບ 22:28** **ມາຣະໂກ 11:23**
ຈ) ໃສ່ປຸຍດ້ວຍການກະທຳທີ່ເໝາະສົມ **ຢາໂກໂບ 2:26**
ຈົ່ງຄິດສະເໝີວ່າມານຮ້າຍພະຍາຍາມທີ່ຈະຫວ່ານເມັດພັນຂອງມັນລົງໃນຄວາມຄິດຂອງທ່ານ
**2ໂກຣິໂທ10:5** **ຟີລິບບອຍ4:8**

**8.** ຫລີກລ້ຽງການທະເລາະເບາະແວ້ງ **ຢາໂກໂບ 3:16** **ສຸພາສິດ 20:3**

ກ) ຕົບມືຂ້າງດຽວບໍ່ດັງ ຈົ່ງປະຕິເສດທີ່ຈະມີເລື່ອງ
ຄຳຕອບອ່ອນຫວານລະລາຍຄວາມຮ້າຍ **ສຸພາສິດ 15:1**
ຂ) ຮູ້ຈັກຫລີກລ້ຽງການທະເລາະ ບໍ່ແມ່ນພະຍາຍາມແກ້ຕົວ **ມັດທາຍ 23:12**
ຄ) ຫວ່ານຄວາມຮັກເມື່ອອີກຝ່າຍຫວ່ານການແຕກແຍກ
ໂຣມ 12:21 ຟີລິບບອຍ2:3 **ຄາລາເຕັຽ 5:14,15**
ງ) ຄູ່ຄອງຂອງທ່ານບໍ່ແມ່ນສັດຕູ **ເອເຟໂຊ 6:12**
ຈ) ຫລີກລ້ຽງໂດຍການ – ຮັບກາງແຂນຂອງຕົນແບກ – ທ່ານໄດ້ຕາຍໄປແລ້ວ
ສ) ຖ້າຈຳເປັນ ຮຽກຮ້ອງໃຫ້ຢຸດການທະເລາະວິວາດ
ຢ່າເວົ້າວ່າ "ເຈົ້ານັ້ນແຫລະເປັນຕົ້ນເຫດ"
ຄວບຄຸມລີ້ນຂອງຕົນ **ຢາໂກໂບ 3:2-8**
ອະທິຖານຢ່າງງຽບໆ ເປັນເວລາ 3ນາທີ
ສາລະພາບ ແລະຂໍໂທດ

## *ດ. ຜົນຮັບ*

**1ເປໂຕ 3:7** ເປັນຄູ່ອະທິຖານທີ່ມີພະລັງຂະນາດເຄື່ອນພູເຂົາໄດ້

**ມັດທາຍ 18:19** "ຖ້າໃນພວກທ່ານທີ່ຢູ່ໃນໂລກສອງຄົນຈະຮ່ວມໃຈກັນຂໍສິ່ງນຶ່ງສິ່ງໃດ ພະບິດາຂອງເຮົາ ຜູ້ຊົງ..."

**ໂຢຮັນ13:35** "ຖ້າເຈົ້າທັງຫລາຍຮັກກັນແລະກັນ ດັ່ງນີ້ແຫລະຄົນທັງປວງກໍຈະຮູ້ໄດ້ວ່າ..."

GCI

## II. ຄຣິສຕຽນຊຶ່ງເປັນພັນລະຍາ

"ໃຜຈະພົບພັນລະຍາທີ່ດີ ນາງປະເສີດຍິ່ງກວ່າທັບທິມຫລາຍ ຈິດໃຈຂອງສາມີນາງກໍວາງໃຈໃນ ນາງ..
**ສຸພາສິດ 31:10-11**

### *ກ. ເປັນຜູ້ທີ່ຍອມຢູ່ໃຕ້ການນໍາຂອງສາມີ*

**1. ຍອມເຊື່ອຟັງ**

**ເອເຟໂຊ 5:22-24** "ຝ່າຍພັນລະຍາ ຈົ່ງຍອມເຊື່ອຟັງສາມີຂອງຕົນ"

ການຍອມເຊື່ອຟັງ ເປັນເລື່ອງຂອງທ່າທີໃນໃຈ ຊຶ່ງເຮັດໃຫ້ເຮົາເຕັມໃຈຍອມໃຫ້ ຄວາມຈໍາເປັນ ຄວາມປາດຖະໜາ ສິດທິ ແລະຊື່ສຽງຂອງຜູ້ອື່ນມາກ່ອນຂອງຕົນເອງ ເພື່ອຖວາຍກຽດແກ່ອົງພະຄຣິດ **ຟີລິບບອຍ 2:3-5**
**1ເປໂຕ 3:1-61; ໂກຣິນໂທ 11:3,8,9; ໂກໂລຊາຍ 3:17,18; ປະຖົມມະການ 3:16**

ກ) ການຍອມເຊື່ອຟັງເປັນຄວາມຮັບຜິດຊອບຂອງພັນລະຍາ ພະຄໍາພີບັນຊາຜູ້ເປັນພັນລະຍາໄວ້ໃຫ້ມີໃຈຍອມເຊື່ອຟັງ ມັນເປັນສິ່ງທີ່ນາງຕ້ອງເລືອກເຮັດເຊັ່ນດຽວກັນກັບການຍອມເຊື່ອຟັງພະຄຣິດເມື່ອພັນລະຍາຍອມເຊື່ອຟັງສາມີດ້ວຍຄວາມຮັກ ແລະຄວາມເຕັມໃຈວິນຍານອັນອ່ອນສຸພາບ ແລະເຕັມດ້ວຍຄວາມຮັກຂອງນາງຈະເປັນແຮງຜັກດັນໃຫ້ສາມີປະຕິບັດຕໍ່ນາງດ້ວຍຄວາມສຸພາບອ່ອນໂຍນ ແລະທະນຸທະນອມພ້ອມທີ່ຈະປົກປ້ອງດູແລນາງ

ຂ) ພະຄໍາພີຊີ້ໃຫ້ເຫັນວ່າ ການຍອມເຊື່ອຟັງຂອງພັນລະຍາເປັນສິ່ງທີ່ຈະຕ້ອງກະທໍາຢ່າງຕໍ່ເນື່ອງຈົນເປັນປົກກະຕິໃນວິຖີຊີວິດ

ຄ) ການເຊື່ອຟັງເປັນເລື່ອງຝ່າຍວິນຍານ ເປັນສິ່ງຊຶ່ງຕ້ອງເຮັດຄື "ເຊື່ອຟັງອົງພະຜູ້ເປັນເຈົ້າ **"ໂກໂລຊາຍ3:17**

ງ) ການເຊື່ອຟັງ ໝາຍເຖິງພັນລະຍາຕ້ອງຍອມໃຫ້ຂອງປະທານ ຄວາມສາມາດ ຊັບສິນ ແລະພະລັງງານທຸກຢ່າງທີ່ນາງມີຢູ່ນັ້ນເພື່ອໃຫ້ສາມີໄດ້ໃຊ້ປະໂຫຍດພັນລະຍາຍິນຍອມທີ່ຈະໃຊ້ຄວາມສາມາດທຸກຢ່າງພາຍໃຕ້ການດູແລຂອງສາມີເພື່ອປະໂຫຍດແກ່ສາມີ ແລະຄອບຄົວຂອງຕົນ ພັນລະຍາເຮັດໜ້າທີ່ເປັນເພື່ອນຮ່ວມທີມຂອງສາມີບາກບັ່ນມຸ້ງໄປສູ່ເປົ້າໝາຍອັນດຽວກັນ

ຈ) ການເຊື່ອຟັງ ຈະຕ້ອງມີຢູ່ທັງໃນທ່າທີ ແລະການກະທໍາຂອງນາງ

ສ) ການເຊື່ອຟັງ ຄືຄວາມຮັກທີ່ສະແດງອອກມາເປັນການກະທໍາ ມັນສື່ໃຫ້ສາມີຂອງນາງໄດ້ເຫັນວ່າເຂົາເປັນຄົນທີ່ມີຄຸນຄ່າຫລາຍກວ່າ ແລະຄວາມຕ້ອງການຂອງເຂົາສໍາຄັນຍິ່ງກວ່າຄວາມຕ້ອງການຂອງນາງ
ລະບຽບຂອງພະເຈົ້າ **1ໂກຣິນໂທ 11:3**
"ພະຄຣິດຊົງເປັນຫົວຂອງຊາຍທຸກຄົນ ແລະຊາຍເປັນຫົວຂອງຍິງ ແລະພະເຈົ້າຊົງເປັນພະສຽນຂອງພະຄຣິດ"

GCI

## ຂ. ເປັນຜູ້ທີ່ໃຫ້ກຽດໃນຄວາມເປັນຫົວຂອງສາມີ

1. ພຶດຕິກໍາ

**1ເປໂຕ3:1-6** ການປະພຶດຂອງພັນລະຍາ

ພຶດຕິກໍາຂອງພັນລະຍາ ຄວນເປັນສິ່ງບົ່ງບອກສາມີວ່າເຈົ້າໃຫ້ເຄົາລົບ ໃຫ້ກຽດເຂົາໃນຄວາມເປັນຜູ້ຊາຍຊຶ່ງພະເຈົ້າໄດ້ແຕ່ງຕັ້ງໄວ້ໃຫ້ເປັນຫົວຂອງເຈົ້າ
ຝ່າຍສາມີຈະເຝົ້າສັງເກດ"ກວດສອບ" ການປະພຶດຂອງພັນລະຍາ ຄໍາວ່າ "ສັງເກດ" ໝາຍເຖິງການພິຈາລະນາເບິ່ງຢ່າງໃກ້ຊິດຊືມຊັບໃນສິ່ງທີ່ເຫັນ ການເພັ່ງພິນິດເບິ່ງພຶດຕິກໍາຂອງນາງດ້ວຍຄວາມສົນອົກສົນໃຈຢ່າງເຕັມທີ່ ເຊັ່ນດຽວກັບການສາຍພາບຊໍ້າໃນທໍລະທັດເຂົາຈະເຝົ້າເບິ່ງພຶດຕິກໍາຂອງນາງຊໍ້າແລ້ວຊໍ້າອີກ ເພື່ອພິຈາລະນາເບິ່ງວ່າ ການດໍາເນີນຊີວິດ (ພຶດຕິກໍາ) ຈະກົງກັບຄໍາເວົ້າ (ຄໍາພະຍານ) ຂອງນາງຫລືບໍ່

ກ) ນາງຕ້ອງເຮັດໃຫ້ເຂົາຮູ້ວ່າ ນາງຕ້ອງການການປົກປ້ອງຄຸ້ມຄອງ ຈາກເຂົາທັງຝ່າຍວິນຍານ ດ້ານອາລົມ ຄວາມຄິດ ແລະຝ່າຍຮ່າງກາຍ ເອາຕ້ອງການ ການປົກປ້ອງຈາກອາດານໃຫ້ພົ້ນຈາກງູຮ້າຍ- ແຕ່ນາງກັບຕັດສິນໃຈເຮັດຕາມລໍາພັງຕົນເອງ ນາງເພິ່ງພາໃນຄວາມຮູ້ ຄວາມສາມາດຂອງຕົນເອງ ຈຶ່ງລົງເອີຍດ້ວຍການຖືກລໍ້ລວງ 1ເປໂຕ3:7 **1ຕີໂມທຽວ2:14**

ຂ) ນາງຄວນເບິ່ງສາມີຂອງຕົນໃນຖານະທີ່ເປັນຜູ້ລ້ຽງດູເບື້ອງຕົ້ນໃນຊີວິດ
**ປະຖົມມະການ2:15** ພະເຈົ້າຊົງຕັ້ງຜູ້ຊາຍໄວ້ໃນສວນເອເດນເພື່ອໃຫ້ເບິ່ງ ແລະຮັກສາສວນນັ້ນ.

ຄ) ພັນລະຍາຄວນຈະໃຫ້ຄວາມເຄົາລົບນັບຖືໃຫ້ກຽດ ແລະສະແດງຄວາມຈົງຮັກພັກດີຕໍ່ສາມີຂອງຕົນຫລາຍຍິ່ງກວ່າຜູ້ຊາຍຄົນອື່ນໃດ ບໍ່ວ່າຈະເປັນຜູ້ນໍາຝ່າຍວິນຍານ ສິດຍາພິບານ ອາຈານ ຍາດ ຫລືເພື່ອນຂອງນາງ

ງ) ນາງຄວນມອບກາຍໃຫ້ແກ່ສາມີ ແລະບໍ່ສະຫງວນຄວາມຮັກໄດ້ຈາກເຂົາ
**1ໂກຣິນໂທ 7:3-5**

## ຄ. ເປັນຜູ້ທີ່ຊື່ນຊົມ<u>ເຫລື້ອມໃສ</u>ໃນຕົວສາມີ

1. ພັນລະຍາຕ້ອງຍອມຮັບ ແລະມີຄວາມເຫລື້ອມໃສໃນສາມີຂອງຕົນ ໃນຖານະທີ່ເຂົາເປັນຜູ້ນໍາ

ກ) ເປັນການສ້າງຄວາມໝັ້ນໃຈ
ຂ) ສະແດງຄວາມຈົງຮັກພັກດີຕໍ່ເຂົາ ໃນຍາມທີ່ຕ້ອງປະເຊີນກັບອຸປະສັກ
ຄ) ສະແດງຄວາມຊື່ນຊົມໃນເຂົາເມື່ອເຂົາ.. (ເພັງສັນລະເສີນ 15)
1) ດໍາເນີນຊີວິດທ່ຽງທໍາ ປັດສະຈາກຕໍານິ
2) ເຮັດການດີ ທໍາ ຊອບ ແລະຍຸດຕິທໍາ
3) ເວົ້າແລະຄິດໃນສິ່ງທີ່ຈິງ – ເປັນຄົນຊື່ກົງ
4) ບໍ່ຍອມວ່າຮ້າຍ ຫລືນິນທາຄົນ
5) ບໍ່ເຮັດການຮ້າຍຕໍ່ເພື່ອນບ້ານ
6) ຢືນຫຍັດຕໍ່ສູ້ເພື່ອເພື່ອນຂອງເຂົາ
7) ໃຫ້ກຽດແກ່ຄົນຂອງພະເຈົ້າ
8) ປະຕິເສດຄວາມຊົ່ວຮ້າຍ ແລະຄົນຊົ່ວຮ້າຍ
9) ຮັກສາຄໍາສັນຍາເຖິງແມ່ນຕ້ອງເສັຽປະໂຫຍດ

GCI

10) ທ່ຽງທຳ ແລະຍຸດຕິທຳໃນເລື່ອງເງິນທອງ ບໍ່ເອົາລັດເອົາປຽບຜູ້ອື່ນ
11) ບໍ່ຍອມຮັບສິນບົນ
12) ບໍ່ປ່ຽນແປງ ເຖິງແມ່ນຈະຕ້ອງພົບກັບຄວາມເຈັບຊ້ຳ

ງ) ລິເລີ່ມສະແຫວງຫາຄຳແນະນຳແລະຄວາມຄິດເຫັນຈາກສາມີກ່ອນການຕັດສິນໃຈໃນເລື່ອງຕ່າງໆ
ຈ) ພຽນພະຍາຍາມທີ່ຈະຈົດຈຳໃນສິ່ງທີ່ເຂົາເຄີຍສະແດງຄວາມປາດຖະໜາ ຫລືຮ້ອງຂໍໄວ້ ແລະຕອບສະໜອງຕາມນັ້ນ
ສ) ພະຍາຍາມຫາໂອກາດທີ່ຈະຈຸດປະກາຍຄວາມສົນໃຈໃນຄຸນລັກສະນະເດັ່ນໃນຕົວສາມີ
ຊ) ພະຍາຍາມສ້າງຄວາມປະທັບໃຈໃນອາຊີບຂອງສາມີ
ຍ) ສະແດງຄວາມຮູ້ສຶກປະທັບໃຈຕໍ່ສາມີເປັນປະຈຳທຸກວັນ
ດ) ມີຄວາມຮູ້ສຶກໂອ ແລະສະໜັບສະໜູນເປົ້າໝາຍຂອງສາມີ
ຕ) ສະແດງຄວາມຊື່ນຊົມຕໍ່ສາມີໂດຍທາງອື່ນ ນອກເໜືອຈາກຄຳເວົ້າ
1) ສົນອົກສົນໃຈໃນຄວາມວິຕົກກັງວົນຂອງເຂົາ
2) ເຮັດໃຫ້ມີສະເນ່ເທົ່າທີ່ຈະເຮັດໄດ້
3) ຮັກສາຄວາມສະອາດຮຽບຮ້ອຍພາຍໃນບ້ານ
4) ປຸງອາຫານທີ່ເຂົາມັກ
5) ສະແດງຄວາມສົນໃຈຕໍ່ເຂົາ ໂດຍການປະສານສາຍຕາ
ຖ) ເມື່ອເຮັດຜິດ ໃຫ້ກ່າວຄຳຂໍໂທດເຂົາ

## *ງ. ເປັນຜູ້ທີ່ຍົກຍ້ອງ ແລະໃຫ້ກຳລັງໃຈສາມີ*

1. ພັນລະຍາຕ້ອງຮູ້ຈັກກ່າວຄຳຍົກຍ້ອງ ແລະສະແດງຄວາມຊື່ນຊົມໃນສາມີ

“ຢ່າໃຫ້ຄຳຫຍາບຄາຍອອກມາຈາກປາກທ່ານເລີຍແຕ່ຈົ່ງກ່າວຄຳທີ່ດີ ແລະເປັນປະໂຫຍດໃຫ້ເໝາະສົມກັບຄວາມຕ້ອງການ ເພື່ອຈະໄດ້ເປັນຄຸນແກ່ຄົນທີ່ໄດ້ຍິນໄດ້ຟັງ” **ເອເຟໂຊ 4:29**

ກ) ເຈາະຈົງຊັດເຈນ ເມື່ອຍົກຍ້ອງເຂົາໃນເລື່ອງບຸກຄະລິກກະພາບ,ອາລະຜູ້ນຳ,ການລ້ຽງດູ ຄຸນນະ ທຳ ຄວາມອົດທົນ ຂອງປະທານ ແລະຄວາມສາມາດທີ່ມາຈາກພະເຈົ້າ

ຂ) ໃຫ້ກຳລັງໃຈເຂົາທີ່ຈະມຸ້ງໝັ້ນເຮັດຕາມເປົ້າໝາຍຊີວິດທີ່ພະເຈົ້າຊົງປະທານໃຫ້

ຄ) ຮູ້ຈັກເວົ້າສະແດງຄວາມຂອບໃຈ

ຄົນເຮົາຮູ້ສຶກມັກ ແລະຢາກໃກ້ຊິດຜູ້ທີ່ສະແດງຄວາມຊື່ນຊົມໃນຕົວເຂົາ ກົງກັນຂ້າມເຮົາຈະຮູ້ສຶກເຫີນຫ່າງຈາກຄົນທີ່ເວົ້າດູຖູກ ແລະຢຽບຢາມເຮົາ

## *ຈ. ເປັນຜູ້ໄດ້ຮັບຄຳຍົກຍ້ອງຈາກຄົນອື່ນ*

1. ພັນລະຍາທີ່ຢໍາເກງພະເຈົ້ານັ້ນ ສົມຄວນໄດ້ຮັບການຍົກຍ້ອງຈາກຄົນອື່ນ

“ແຕ່ຈົ່ງໃຫ້ເປັນການປະດັບກາຍໃນຈິດໃຈ” ສຳແດງອອກໂດຍບຸກຄະລິກກະພາບ ແລະການປະພຶດທີ່ດີຂອງນາງ **1ເປໂຕ3:4**
“ແຕ່ໃຫ້ປະດັບດ້ວຍການກະທຳດີ ຊຶ່ງສົມກັບຍິງທີ່ປະກາດຕົວວ່າຖືພະເຈົ້າ” **1ຕີໂມທຽວ 2:10**
“ຈົ່ງໃຫ້ນາງຮັບຜົນແຫ່ງນ້ຳມືຂອງນາງ ໃຫ້ການງານຂອງນາງສັນລະເສີນນາງທີ່ປະຕູເມືອງ” **ສຸພາສິດ 31:31**

GCI

ກ) ນາງຄອນໄດ້ຮັບການສັນລະເສີນຈາກຜູ້**<u>ນຳຝ່າຍວິນຍານ</u>**ຂອງນາງເພື່ອ:

1) ການທີ່ນາງຮູ້ເຖິງຄວາມຕ້ອງການຂອງຜູ້ນຳ **1ເທຊະໂລນີກ 5:12–13**

2) ສະຕິປັນຍາ ແລະຄວາມເຂົ້າໃນຂອງນາງ **ສຸພາສິດ 31:26**

3) ຄວາມຮັກທີ່ນາງມີຕໍ່ສາມີ ແລະລູກ

4) ການເຊື່ອຟັງແລະຍອມຢູ່ໃຕ້ອຳນາດສາມີ

5) ການມີມາດຕະຖານທາງສິນລະທຳທີ່ສູງສົ່ງ

6) ການດູແລບ້ານເຮືອນ

ຂ) ລູກໆຂອງນາງຄອນຈະສັນລະເສີນນາງ **ສຸພາສິດ31:28**

ມີອິດທິພົນທີ່ດີໃນຝ່າຍວິນຍານຕໍ່ຄົນອື່ນ **31:10**

ມີຄວາມກົມກຽວກັບສາມີ **31:11,12**

ມີຄວາມຂະຫຍັນ ແລະປະຫຍັດອົດອອມ **31:13,14,15**

ມີຄວາມຕື່ນຕົວ ແລະຊຳນານໃນການຕອບສະໜອງຄວາມຈຳເປັນຂອງເຂົາ

ມີສະຕິປັນຍາ ແລະໃຈກະລຸນາຕໍ່ຜູ້ອື່ນ **31:26**

ຄ) ເພື່ອນບ້ານຂອງນາງ ຄອນສັນລະເສີນນາງເພາະ

ຄວາມມີນ້ຳໃຈກວ້າງຂວາງຕໍ່ຄົນຍາກຈົນ **31:20**

ການຊ່ວຍເຫລືອຜູ້ທີ່ຕົກທຸກໄດ້ຍາກ

ການມີນ້ຳໃຈຕ້ອນຮັບແຂກ **1ຕີໂມທຽວ 5:10**

ງ) ທຸກຄົນໃນພະກາຍຂອງພະຄຣິດ ຄອນສັນລະເສີນນາງ ເພາະ

ການປົນນິບັດຮັບໃຊ້ທຳມິກະຊົນ **1ຕີໂມທຽວ 5:10**

ຄວາມສັດຊື່ຕໍ່ຄຳສາບານໃນການສົມລົດ **5:9**

ການສັ່ງສອນຜູ້ຍິງສາວ **ຕີໂຕ 2:4**

**ສຸພາສິດ 12:4**

"ພັນລະຍາດີເປັນມົງກຸດຂອງສາມີຕົນ ແຕ່ນາງຜູ້ທີ່ນຳຄວາມອັບອາຍມາກໍເໝືອນຄວາມເນົ່າເປື່ອຍໃນກະດູກສາມີ"

## *ສ. ເປັນຜູ້ທີ່ມີຈິດໃຈທີ່ສະຫງົບ ແລະສຸພາບ*

1. "ທັດສະນະຄະຕິ" – ຄວາມສະຫງົບທີ່ບໍ່ຮູ້ເສື່ອມສະຫລາຍ" **1ເປໂຕ 3:4**

ກ) ຈິດໃຈທີ່ສະຫງົບ ແລະສຸພາບ

1) ບໍ່ຮູ້ເສື່ອມສະຫລາຍ – ບໍ່ມີວັນລົບເລືອນ, ບໍ່ຜ່ານພົ້ນໄປ, ທຳລາຍບໍ່ໄດ້
ການຮູ້ຈັກບັງຄັບຕົນ, ຄວາມງາມອັນສະຫງົບສະງ່ຽມ ແລະສັກສີ
**ສຸພາສິດ 31:25**
ຄວາມສະຫງົບເຍືອກເຢັນຢູ່ພາຍໃຕ້ການຄວບຄຸມບໍ່ກໍ່ໃຫ້ເກີດຄວາມເດືອດຮ້ອນໃດໆ
ຄວາມອ່ອນໂຍນຄືການຍອມມອບສິດທິ ແລະຄວາມຄາດຫວັງທຸກຢ່າງໄວ້ກັບພະເຈົ້າ

2) ຈິດໃຈທີ່ສະຫງົບ– ມີສັນຕິສຸກ– ເອົາຊະນະຄວາມຢ້ານ ແລະກັງວົນຫລຸດພົ້ນຈາກອາການຕື່ນຕົກໃຈ ຫລືຄວາມຮູ້ສຶກລຳຄານໃຈຕ່າງໆ

3) ຕົວຕົນທີ່ຊ້ອນຢູ່ພາຍໃນໃຈ – ເປັນສະຕຣີບໍລິສຸດຊຶ່ງໄວ້ວາງໃຈໃນພະເຈົ້າໃຫ້ພະເຈົ້າເປັນແຫລ່ງແຫ່ງຄວາມຊ່ວຍເຫລືອໃນທຸກດ້ານ – ທັງໃນເລື່ອງຄວາມສຸກ ຄວາມຍິນດີ ຄວາມຮັກ ການຍົກຍ້ອງແລະການຍອມຮັບຜົນຂອງການໄວ້ວາງໃຈວ່າພະເຈົ້າເປັນຜູ້ຕອບສະໜອງຄວາມຕ້ອງການຂອງເຮົາໃນທຸກດ້ານ ເຮົາເອີ້ນວ່າການຮູ້ຈັກພໍໃຈໃນສິ່ງທີ່ຕົນມີຢູ່

GCI

## *ຊ. ເປັນຜູ້ທີ່ມີໃຈກະຕັນຍູ*

### 1. ມີໃຈກະຕັນຍູ

ກ) ໃຫ້ຄວາມຄາດຫວັງທຸກຢ່າງໃນພະເຈົ້າ **ເພງສັນລະເສີນ 62:5**
ຄວາມຄາດຫວັງ ອາດທຳລາຍຄວາມມີໃຈກະຕັນຍູໄປໄດ້
ການມີໃຈກະຕັນຍູ ເປັນພື້ນຖານຂອງຄວາມສຸກ
ຜູ້ຊາຍຈະຮູ້ສຶກຊື່ນຊອບໃນຜູ້ຍິງທີ່ມີໃຈກະຕັນຍູ

ຂ) ບໍ່ຄາດຫວັງສິ່ງໃດເລີຍ - ຮູ້ສຶກຂອບຄຸນໃນທຸກສິ່ງທຸກຢ່າງ ບໍ່ວ່າຈະເປັນເລື່ອງໃດທີ່ສະທ້ອນໃຫ້ເຫັນເຖິງຄວາມຮັກທີ່ສາມີມີຕໍ່ຕົວເອງ

ຄ) ຮຽນຮູ້ທີ່ເພິ່ງພໍໃຈໃນສິ່ງທີ່ມີຢູ່ດ້ວຍໃຈຮັກພະເຈົ້າ ແລະໃຫ້ໃຈຈົດຈໍ່ໃນສິ່ງທີ່ຢູ່ເບື້ອງເທິງ
**1ຕີໂມທຽວ6:6–11 ໂກໂລຊາຍ 3:1–2**
ທັດສະນະຄະຕິຂອງພັນລະຍາ ຄືຕົວກຳນົດບັນຍາກາດຂອງບ້ານ ຜູ້ຍິງປຽບເໝືອນດຸມລໍ້ ຖ້າດຸມນັ້ນເສັຽສົມດູນໄປ ທຸກຄົນໃນລົດຍ່ອມຮູ້ສຶກເຖິງຄວາມບໍ່ສົມດູນນັ້ນໄປນຳ

## *ຍ. ເປັນຜູ້ທີ່ຮູ້ຈັກ<u>**ຕອບສະໜອງ**</u>ຢ່າງເໝາະສົມ*

1. ຕອບສະໜອງ - ນາງຊາຣາເຊື່ອຟັງອັບລາຮາມ **1ເປໂຕ 3**:6

"ເຊື່ອຟັງ" - ການໃຫ້ຄວາມສົນໃຈແກ່ບາງຄົນຢ່າງໃກ້ຊິດ - ເປັນພາບຂອງການຄອຍບົວລະບັດເພື່ອຕອບສະໜອງຄວາມຕ້ອງການຂອງໃຜບາງຄົນ ເປັນພາບທີ່ສ້າງສັນເປັນການຕອບສະໜອງເພື່ອທີ່ຈະຊ່ວຍເຫລືອ

ຈົ່ງຮຽນຮູ້ທີ່ຈະຕອບສະໜອງ ບໍ່ແມ່ນປະຕິກິລິຍາໂຕ້ຕອບ

ຕອບສະໜອງຕໍ່ສາມີ ໂດຍທ່າທີຂອງການອະທິຖານ

ກ) ເປັນພັນລະຍາຊຶ່ງອະທິຖານ ແລະວິງວອນເພື່ອສາມີ ສຸພາສິດ 31:21
ຂ) ທູນຄວາມເຂົ້າໃຈ ແລະປັນຍາຈາກພະເຈົ້າ ເພື່ອພາລະບັນຫາຂອງສາມີ
ຄ) ຮຽນຮູ້ວິທີທີ່ຈະວິງວອນຕໍ່ພະເຈົ້າຢ່າງມີສະຕິປັນຍາ ເພື່ອສາມີ
ງ) ຮຽນຮູ້ວິທີທີ່ຈະຮ້ອງຂໍຈາກສາມີ

2. ເອສເທີ ປະກາດໃຫ້ມີການອົດອາຫານ 3 ວັນ ກ່ອນທີ່ຈະເຂົ້າເຝົ້າເພື່ອທູນຂໍ

ກ) ພັນລະຍາຈະຕ້ອງມີຄວາມສຳພັນທີ່ຖືກຕ້ອງກັບພະເຈົ້າ
ຂ) ພັນລະຍາຈະຕ້ອງມີທ່າທີທີ່ຖືກຕ້ອງໃນການຮ້ອງຂໍ
ຄ) ພັນລະຍາຈະຕ້ອງມີທັດສະນະຄະຕິທີ່ຖືກຕ້ອງ- ຈິດໃຈຕ້ອງປັດສະຈາກການບໍ່ ໃຫ້ອະໄພ
ງ) ພັນລະຍາຈະຕ້ອງຊື່ສັດຕໍ່ພະເຈົ້າ ແລະພ້ອມທີ່ຈະເສັຽສະລະໃນການຮ້ອງຂໍນັ້ນ
ຈ) ຕ້ອງລໍຄອຍເວລາທີ່ເໝາະສົມ ແລະຮູ້ຈັກອົດທົນ